ສົ່ງ: ໜ່ວຍກຳມະບານ ສຳນັກງານ ຄຄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະຫະພັນກຳມະບານ ທຫລ

ກຳມະບານທະນາຄານ ທຫລ

ເລກທີ 57 /ກບຣຖ. ທຫລ

ນະຄອນຫຼວງວຽງຈັນ, ວັນທີ **13** ມິຖຸນາ **2018**

**ແຈ້ງການ**

**ເຖິງ:** ບັນດາໜ່ວຍກຳມະບານທະນາຄານ ທະນາຄານແຫ່ງ ສປປ ລາວ.

**ເລື່ອງ:** ສະຫຼຸບລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງສະຫະພັນກຳມະບານລາວ ປະຈຳປີ **2018**.

- ອີງຕາມແຈ້ງການຂອງສູນກາງສະຫະພັນກຳມະບານລາວ ສະບັບເລກທີ **411/ສກລ**, ລົງວັນທີ **17** ເມສາ **2018**.

ກຳມະບານທະນາຄານ ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງບັນດາໜ່ວຍກຳມະບານ ທີ່ຂຶ້ນກັບທະນາຄານ ທຫລ ໃຫ້ເປັນເຈົ້າການສະຫຼຸບລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ **5** ເປັນເຈົ້າ ຂອງສະຫະພັນກຳມະບານລາວ ປະຈຳປີ **2018** ແລະ ແຜນການປີ **2019,** ໂດຍຕິດພັນກັບວຽກງານວິຊາສະເພາະ ແລະ ຜ່ານການຈັດຕັ້ງປະຕິບັດວຽກງານເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າໃນປີຜ່ານມາຊອກໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນດັ່ງກ່າວ ແລະ ບາງຄຳເຫັນສະເໜີ (ຖ້າມີ), ສຳລັບການປະເມີນຜົນ ແມ່ນໃຫ້ສະຫຼຸບຕາມແບບຟອມປະເມີນຂອງສະມາຊິກກຳມະບານ **5** ເປັນເຈົ້າ ປະຈຳປີ.......ແລະ ແບບຟອມລາຍງານການປະເມີນ **5** ເປັນເຈົ້າຂອງໜ່ວຍກຳມະບານປະຈຳປີ.......(ລາຍລະອຽດມີເອກະສານແບບຟອມປະເມີນຄັດຕິດມາພ້ອມ). ພາຍຫຼັງສະຫຼຸບສຳເລັດແລ້ວ, ໃຫ້ສົ່ງບົດລາຍງານມາຍັງ **ທ່ານ ນ. ມະໂນລາ ເມືອງມະນີ** ຄະນະກຳມະບານທະນາຄານ ທຫລ, ພາຍໃນວັນທີ **29** ມິຖຸນາ **2018**.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາໜ່ວຍກຳມະບານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວນີ້ດ້ວຍ.

**ກຳມະບານທະນາຄານ ທະນາຄານແຫ່ງ ສປປ ລາວ**

**ປະທານ**

ແສງເພັດ ດວງພິລາ

17/6/18

ສົ່ງ: ໜ່ວຍກຳມະບານ ສຳນັກງານ ຄຄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະຫະພັນກຳມະບານ ທຫລ

ກຳມະບານທະນາຄານ ທຫລ ເລກທີ 61 /ກບຮຖ. ທຫລ

ນະຄອນຫຼວງວຽງຈັນ, ວັນທີ 22 ມິຖຸນາ 2018

# ແຈ້ງການເພີ່ມເຕີມ

**ເຖິງ:** ບັນດາໜ່ວຍກຳມະບານທະນາຄານ ທະນາຄານແຫ່ງ ສປປ ລາວ.

**ເລື່ອງ:** ວິທີຈັດຕັ້ງປະຕິບັດວຽກງານສະຫຼຸບລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງສະຫະພັນກຳມະບານລາວ ປະຈຳປີ **2017.**

- ອີງຕາມແຈ້ງການຂອງສູນກາງສະຫະພັນກຳມະບານລາວ ສະບັບເລກທີ **411/ສກລ**, ລົງວັນທີ **17** ເມສາ **2018.**
- ອີງຕາມການແນະນຳຂອງປະທານກຳມະບານທະນາຄານ ທຫລ ແລະ ການພົວພັນປະສານງານກັບສູນກາງສະຫະພັນກຳມະບານລາວ.

ກຳມະບານທະນາຄານ ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງບັນດາໜ່ວຍກຳມະບານ ທີ່ຂຶ້ນກັບທະນາຄານ ທຫລ ຊາບຕື່ມ ກ່ຽວກັບວິທີຈັດຕັ້ງປະຕິບັດວຽກງານສະຫຼຸບລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ **5** ເປັນເຈົ້າ ຂອງສະຫະພັນກຳມະບານລາວ ປະຈຳປີ **2017,** ເຊິ່ງມີລາຍລະອຽດດັ່ງນີ້:

1. **ການປະເມີນຂອງສະມາຊິກກຳມະບານ 5 ເປັນເຈົ້າ**

- ໃຫ້ສະມາຊິກກຳມະບານ ປະເມີນຕົນເອງຕາມຮ່າງແບບຟອມປະເມີນຜົນສະມາຊິກກຳມະບານ **5** ເປັນເຈົ້າ ປະຈຳປີ **2017;**
- ການປະເມີນຜົນ ແມ່ນອີງຕາມເນື້ອໃນຂໍ້ແຂ່ງຂັນ **5** ເປັນເຈົ້າ ຄື:

1) ເປັນເຈົ້າການໂຄສະນາສຶກສາອົບຮົມການເມືອງ-ແນວຄິດ;
2) ເປັນເຈົ້າໃນການປັບປຸງແບບແຜນການນຳພາ ແລະ ຂະຫຍາຍການຈັດຕັ້ງກຳມະບານ;
3) ເປັນເຈົ້າການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພະນັກງານສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ;
4) ເປັນເຈົ້າເຂົ້າຮ່ວມໃນການຕິດຕາມ, ກວດກາການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ວັດທະນະທຳ-ສັງຄົມ;
5) ເປັນເຈົ້າເຂົ້າຮ່ວມໃນການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ, ລະບຽບກົດໝາຍຂອງລັດ;

...

- **ຕົນເອງຕີລາຄາ**: ແມ່ນອີງໃສ່ມາດຖານຂໍ້ແຂ່ງຂັນ 5 ເປັນເຈົ້າ, ຖ້າສະມາຊິກກຳມະບານບຸກຄົນໃດໄດ້ຕີລາຄາປະຈຳປີ ຜົນສະເລ່ຍລວມບັນລຸຄາດໝາຍ **80%** ຂຶ້ນໄປ ແມ່ນຈະໄດ້ຢັ້ງຢືນສະມາຊິກກຳມະບານ **5** ເປັນເຈົ້າປະຈຳປີ; ກໍລະນີລຸດ **80%** ລົງມາແມ່ນຈະບໍ່ໄດ້ຢັ້ງຢືນສະມາຊິກກຳມະບານ **5** ເປັນເຈົ້າ;
- **ໝູ່ຄະນະຕີລາຄາ**: ແມ່ນໃຫ້ສະມາຊິກກຳມະບານແຕ່ລະສະຫາຍ ປະກອບຄະແນນໃຫ້ຕົນເອງຕາມມາດຖານຂໍ້ແຂ່ງຂັນ 5 ເປັນເຈົ້າ (ພະນັກງານ ແລະ ສະມາຊິກກຳມະບານສາມາດປະຕິບັດໄດ້ຕາມມາດຖານ ຫລື ບໍ່), ກໍລະນີຖ້າເພີ່ມຂຶ້ນ ຫຼື ລຸດ **80%** ລົງມາ ແມ່ນຍ້ອນສາເຫດຫຍັງ (ໃຫ້ຂຽນໃສ່ **III** ການສັງເກດ ແລະ ຕີລາຄາລວມຂອງການຈັດຕັ້ງ, ຊຶ່ງມີດ້ານດີ ແລະ ດ້ານອ່ອນທີ່ເປັນພື້ນຖານຂອງຜູ້ກ່ຽວ);
- ➢ **ສຳລັບການໃຫ້ຄະແນນຂອງໝູ່ຄະນະຕີລາຄາ** ແມ່ນເອົາຜົນສະເລ່ຍລວມຂອງສະມາຊິກກຳມະບານພາຍໃນໜ່ວຍປະກອບໃຫ້ແລ້ວຫານໃຫ້ຈຳນວນສະມາຊິກກຳມະບານ. **ຕົວຢ່າງ**: ສະມາຊິກກຳມະບານພາຍໃນໜ່ວຍ ມີ **5** ສະຫາຍໄດ້ປະກອບຄະແນນໃຫ້ຜູ້ກ່ຽວຂໍ້ທີ **1** ຄື: ເປັນເຈົ້າການໂຄສະນາສຶກສາອົບຮົມການເມືອງ-ແນວຄິດ (ການໃຫ້ຄະແນນຂອງສະມາຊິກແຕ່ລະສະຫາຍອາດຈະແຕກຕ່າງກັນ) ແມ່ນເອົາຄະແນນຂອງແຕ່ລະສະຫາຍມາບວກເຂົ້າກັນແລ້ວມາຫານໃຫ້ **5** (ຈຳນວນສະມາຊິກກຳມະບານ);

**2. ການປະເມີນຂອງໜ່ວຍກຳມະບານ 5 ເປັນເຈົ້າ**

- ໃຫ້ໜ່ວຍກຳມະບານ ປະເມີນຕາມຮ່າງແບບຟອມປະເມີນຜົນ 5 ເປັນເຈົ້າຂອງໜ່ວຍກຳມະບານ ປະຈຳປີ **2017** (ສຳລັບປີ **2018** ແລະ ປີ **2019** ແມ່ນຍັງບໍ່ໄດ້ປະເມີນຜົນ);
- ສັງລວມຈຳນວນສະມາຊິກກຳມະບານເຂົ້າຕາຕະລາງ ແລ້ວສັງລວມຄະແນນສ່ວນຮ້ອຍຂອງປີ. **ຕົວຢ່າງ**: ສະມາຊິກກຳມະບານພາຍໃນໜ່ວຍ ມີ **5** ສະຫາຍ ແມ່ນເອົາຄະແນນປະເມີນຜົນປະຈຳປີຂອງແຕ່ລະສະຫາຍມາບວກເຂົ້າກັນ ແລ້ວມາຫານໃຫ້ຈຳນວນສະມາຊິກກຳມະບານໃນປີນັ້ນ;
- ຂຽນຂໍ້ສະເໜີຕ່າງໆ (ຖ້າມີ).

**3. ການສະຫຼຸບລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ** ແມ່ນໄດ້ເລື່ອນກຳນົດສົ່ງຈາກ ວັນທີ **22 ມິຖຸນາ 2018** ມາເປັນວັນທີ **20 ກໍລະກົດ 2018.** ພາຍຫຼັງສະຫຼຸບສຳເລັດແລ້ວ, ໃຫ້ສົ່ງບົດລາຍງານມາຍັງ **ທ່ານ ນ. ມະໂນລາ ເມືອງມະນີ** ຄະນະກຳມະບານທະນາຄານ ທຫລ (ກົມນະໂຍບາຍເງິນຕາ).

**<u>ໝາຍເຫດ</u>**: ການປະເມີນຜົນຂອງສະມາຊິກກຳມະບານ 5 ເປັນເຈົ້າ ຄະແນນປະເມີນຜົນປະຈຳປີຂອງສະມາຊິກກຳມະບານ ແມ່ນອີງໃສ່ການຈັດຕັ້ງຕີລາຄາສະເລ່ຍລວມ **5** ເປັນເຈົ້າໃຫ້ຜູ້ກ່ຽວ.

**ເບີໂທຕິດຕໍ່ປະສານງານ: ທ່ານ ນ. ດວງສະໝອນ ດຳລົງບຸນ** ໂທລະສັບ **020 58897789**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາໜ່ວຍກຳມະບານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວນີ້ດ້ວຍ.

**ກຳມະບານທະນາຄານ ທະນາຄານແຫ່ງ ສປປ ລາວ**

**ປະທານ**

ແສງເພັດ ດວງພິລາ

ສົ່ງ: ໜ່ວຍກຳມະບານ ສຳນັກງານ ຄຄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----- 000 -----

ສູນກາງສະຫະພັນກຳມະບານລາວ

ເລກທີ 1750/ສກລ

ນະຄອນຫຼວງວຽງຈັນ, ວັນທີ 27 JUL 2016

# ບົດແນະນຳ
# ການຈັດຕັ້ງປະຕິບັດເນື້ອໃນ
# ຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວ.

- ອີງຕາມລັດຖະດຳລັດ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່ ສະບັບເລກທີ 011/ປປທ ລົງວັນທີ 20/1/2010 ແລະ ດຳລັດ ຂອງນາຍົກລັດຖະມົນຕີສະບັບເລກທີ 121/ນຍ ລົງວັນທີ 24/2/2010 ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍໄລຍະໃໝ່;
- ອີງຕາມກົດໝາຍວ່າດ້ວຍກຳມະບານລາວ ມາດຕາ 50-51 ວ່າດ້ວຍນະໂຍບາຍຕໍ່ຜູ້ທີ່ມີຜົນງານ;
- ອີງໃສ່ເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າຂອງສະຫະພັນກຳມະບານລາວ ທີ່ໄດ້ຮັບຮອງເອົາຢູ່ໃນກອງປະຊຸມໃຫຍ່ຄັ້ງທີ VII ວັນທີ 15/10/2015 ແລະ ກອງປະຊຸມຖອດຖອນບົດຮຽນວຽກງານແຂ່ງຂັນ 2ດີ 5ເປັນເຈົ້າ ໃນວັນທີ 26-27/5/2016.

ຂະບວນການແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວ ແມ່ນຂະບວນການແຂ່ງຂັນຂອງສະມາຊິກກຳມະບານ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ການຈັດຕັ້ງຮາກຖານແຕ່ລະບ່ອນ. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ມີບັນຍາກາດຟົດຟື້ນ, ມີຄວາມເປັນເອກະພາບໃນທົ່ວປະເທດ ສູນກາງສະຫະພັນກຳມະບານລາວ ຈຶ່ງໄດ້ອອກບົດແນະນຳການຈັດຕັ້ງປະຕິບັດ ດັ່ງນີ້:

## I. ຈຸດປະສົງ, ລະດັບຄາດໝາຍການແຂ່ງຂັນ 5 ເປັນເຈົ້າ:

### 1. ຈຸດປະສົງ:

- ເສີມຂະຫຍາຍກຳລັງແຮງສັງລວມຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານລາວເວົ້າລວມ, ເວົ້າສະເພາະແມ່ນພະນັກງານ, ສະມາຊິກກຳມະບານ; ສ້າງເງື່ອນໄຂໃຫ້ເຂົາເຈົ້າມີສະຕິຕື່ນຕົວ, ມີຄວາມເປັນເຈົ້າການໃນການພັດທະນາຕົນເອງຢ່າງຮອບດ້ານ ແລະ ຕັ້ງໜ້າເຂົ້າຮ່ວມຈັດຕັ້ງປະຕິບັດແນວທາງຂອງພັກ, ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງລັດໂດຍຜ່ານຂະບວນການແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານ.
- ເຮັດໃຫ້ພະນັກງານ, ສະມາຊິກກຳມະບານ ສາມາດກຳໄດ້ເນື້ອໃນລວມ, ມາດຖານ,ບັນດາບາດກ້າວໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າແນໃສ່ສ້າງຄວາມເປັນເອກະພາບໃນການຊີ້ນຳ-ນຳພາ, ການຊຸກຍູ້, ຕິດຕາມກວດກາ ແລະ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ.

2. ລະດັບຄາດໝາຍ:

- ເຮັດໃຫ້ຂະບວນການແຂ່ງຂັນ 5 ເປັນເຈົ້າກາຍເປັນຂະບວນການອັນກ້ວາງຂວາງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຕິດພັນກັບແຜນການວຽກງານຂອງກົມກອງ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢູ່ສະຫະພັນກຳມະບານລາວທຸກຂັ້ນ, ສາມາດດຶງດູດເອົາສະມາຊິກກຳມະບານເຂົ້າຮ່ວມຂະບວນການຢ່າງກວ້າງຂວາງ ແລະ ຄົບຖ້ວນ.

- ຖືເອົາການກວດກາຕີລາຄາປະເມີນຜົນຂະບວນການແຂ່ງຂັນ 5 ເປັນເຈົ້າ ເປັນບັ້ນດຳເນີນຊີວິດການເມືອງ ແລະ ປັບປຸງ, ປົວແປງການຈັດຕັ້ງ ກ່ອນການດຳເນີນກອງປະຊຸມໃຫຍ່ສະຫະພັນກຳມະບານລາວແຕ່ລະຂັ້ນ.

- ຜ່ານຂະບວນການແຂ່ງຂັນ 5 ເປັນເຈົ້າ ເຮັດໃຫ້ຄວາມເປັນເຈົ້າຕົນເອງຂອງສະມາຊິກກຳມະບານນັບມື້ເພີ່ມສູງຂຶ້ນ, ການຈັດຕັ້ງສະຫະພັນກຳມະບານທຸກຂັ້ນເຕີບໃຫຍ່ເຂັ້ມແຂງຫຼາຍຂຶ້ນ, ແກ້ໄຂໄດ້ແນວຄິດເອື່ອຍອີງ, ລໍຖ້າ ແລະ ປະກົດການຫຍໍ້ທໍ້ດ້ານຕ່າງໆໃຫ້ຫຼຸດນ້ອຍຖອຍລົງ. ຄຽງຄູ່ກັນນັ້ນ, ຜ່ານການ ເຄື່ອນໄຫວຂະບວນການແຂ່ງຂັນນີ້ ສາມາດຊອກເຫັນພະນັກງານທີ່ພົ້ນເດັ່ນ, ສ້າງໄດ້ພະນັກງານຫຼັກແຫຼ່ງສືບທອດປ່ຽນແທນຢູ່ໃນແຕ່ລະຂັ້ນຫຼາຍຂຶ້ນ.

## II. <u>ເນື້ອໃນ ແລະ ມາດຖານລະອຽດ ຂໍ້ແຂ່ງຂັນ 5 ເປັນເຈົ້າ:</u>

<u>ກ. ເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ</u> ຂອງສະຫະພັນກຳມະບານລາວ ໄດ້ຖືກຮັບຮອງເອົາໃນກອງປະຊຸມໃຫຍ່ຄັ້ງທີ VII ຜູ້ແທນກຳມະບານລາວທົ່ວປະເທດ ຊຶ່ງປະກອບມີດັ່ງນີ້:

1. *ເປັນເຈົ້າ ໂຄສະນາສຶກສາອົບຮົມການເມືອງ-ແນວຄິດ.*
2. *ເປັນເຈົ້າ ໃນການປັບປຸງແບບແຜນການນຳພາ ແລະ ຂະຫຍາຍການຈັດຕັ້ງກຳມະບານ.*
3. *ເປັນເຈົ້າການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພະນັກງານສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ.*
4. *ເປັນເຈົ້າ ເຂົ້າຮ່ວມໃນການຕິດຕາມ, ກວດກາການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ວັດທະນະທຳ-ສັງຄົມ.*
5. *ເປັນເຈົ້າ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ, ລະບຽບກົດໝາຍຂອງລັດ.*

<u>ຂ. ມາດຖານບຸກຄົນ ພະນັກງານການນຳ, ສະມາຊິກກຳມະບານ 5 ເປັນເຈົ້າ:</u>

ເພື່ອສະດວກໃນການຈັດຕັ້ງປະຕິບັດ, ການຕິດຕາມຊຸກຍູ້ ແລະ ປະເມີນຜົນປະຈຳປີ ສູນກາງສະຫະພັນກຳມະບານລາວໄດ້ກຳນົດມາດຖານສະມາຊິກກຳມະບານ 5 ເປັນເຈົ້າ ດັ່ງນີ້:

1. ເປັນເຈົ້າ ໂຄສະນາສຶກສາອົບຮົມການເມືອງ-ແນວຄິດ:

- ຕັ້ງໜ້າເຂົ້າຮ່ວມຮັບຟັງ, ຄົ້ນຄ້ວາຮ່ຳຮຽນ ແລະ ເຊື່ອມຊຶມແນວທາງຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດ, ເຊື່ອມຊຶມມະຕິ, ຄຳສັ່ງ, ແຜນການ ຂອງການຈັດຕັ້ງຢ່າງເຂັ້ມງວດ.
- ເປັນເຈົ້າການຝຶກຝົນຫຼໍ່ຫຼອມທັດສະນະຊົນຊັ້ນກຳມະກອນ, ມີຄວາມຈົ່ງຮັກພັກດີຕໍ່ພັກ, ມີສະຕິເຄົາລົບນັບຖືການຈັດຕັ້ງ, ມີລະບຽບວິໄນ, ມີຄວາມດຸໝັ່ນໃນການອອກແຮງງານ, ມີຄວາມຊື່ສັດບໍລິສຸດ, ປະຢັດ, ອົດທົນ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ທຸກປະເພດ.
- ເປັນເຈົ້າການຍົກລະດັບສີມືແຮງງານ, ພັດທະນາຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ແລະ ມີລະບຽບວິໄນ ໃນການປະຕິບັດໜ້າທີ່ວິຊາສະເພາະ ຂອງຕົນເອງຢ່າງບໍ່ຢຸດຢັ້ງ.

2. ເປັນເຈົ້າ ໃນການປັບປຸງແບບແຜນການນຳພາ ແລະ ຂະຫຍາຍການຈັດຕັ້ງກຳມະບານ:

- ເປັນເຈົ້າການ ເຂົ້າຮ່ວມການເຄື່ອນໄຫວວຽກງານກຳມະບານ ແລະ ມີຫົວຄິດປະດິດສ້າງປະຕິບັດໜ້າທີ່, ສິດ ແລະ ພັນທະຂອງສະມາຊິກກຳມະບານ, ພັນທະຂອງພົນລະເມືອງ ຕາມທີ່ກຳນົດໄວ້ຢູ່ໃນກົດໝາຍຂອງລັດ ແລະ ກົດລະບຽບຂອງສະຫະພັນກຳມະບານລາວ.
- ເສຍເງິນບຳລຸງ, ເງິນກອງທຶນ, ພັນທະອື່ນ(ຖ້າມີ) ໃຫ້ການຈັດຕັ້ງກຳມະບານຄົບຖ້ວນ ທັນເວລາ.
- ເປັນເຈົ້າການປະຕິບັດຫຼັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສ່ວນໜ້ອຍ ປະຕິບັດຕາມສ່ວນຫຼາຍ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງ, ບຸກຄົນປະຕິບັດຕາມການຈັດຕັ້ງ ຢ່າງເຂັ້ມງວດ.
- ເປັນເຈົ້າການເຂົ້າຮ່ວມພັດທະນາການຈັດຕັ້ງໃຫ້ເຕີບໃຫຍ່ເຂັ້ມແຂງ, ໂຄສະນາຂົນຂວາຍຂະຫຍາຍສະມາຊິກ, ຂະຫຍາຍການຈັດຕັ້ງກຳມະບານຢູ່ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ ແລະ ຕັ້ງໜ້າພັດທະນາຄອບຄົວຂອງຕົນໃຫ້ອຸດົມສົມບູນຂຶ້ນໄປເລື້ອຍໆ.

3. ເປັນເຈົ້າ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພະນັກງານສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ:

- ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່, ເປັນເຈົ້າການຊ່ວຍເຫຼືອໝູ່ເພື່ອນ, ເຂົ້າເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນຂອງກຳມະບານ, ເປັນຫ່ວງເປັນໄຍເຖິງຄວາມກ້າວໜ້າຫຼ້າຫຼັງ, ເຖິງສະພາບຊີວິດການເປັນຢູ່ ຫຼື ຄວາມຫຍຸ້ງຍາກດ້ານຕ່າງໆຂອງໝູ່ເພື່ອນພະນັກງານ, ສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ;
- ເປັນເຈົ້າການເຂົ້າຮ່ວມການດຳເນີນຊີວິດການເມືອງ, ເອົາໃຈໃສ່ຕຳນິຕິຊົມຕົນເອງ ແລະ ຕຳນິຕິຊົມໝູ່ເພື່ອນ, ພ້ອມກັນຕ້ານທັດສະນະທີ່ຜິດເຂວ ແລະ ປະກົດການຫຍໍ້ທໍ້ຕ່າງໆຢູ່ໃນການຈັດຕັ້ງເພື່ອພ້ອມກັນກ້າວໜ້າ.
- ເປັນແບບຢ່າງປະຕິບັດລະບຽບວິໄນການອອກແຮງງານ, ປະຕິບັດສັນຍາແຮງງານ ແລະ ນຳໃຊ້ອຸປະກອນເຄື່ອງມືຮັກສາຄວາມປອດໄພ, ຮັກສາຄວາມສະອາດ ແລະ ຮັກສາສິ່ງແວດລ້ອມທີ່ດີໃນສະຖານທີ່ອອກແຮງງານ.

4. ເປັນເຈົ້າ ເຂົ້າຮ່ວມໃນການຕິດຕາມ, ກວດກາການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ວັດທະນະທຳ-ສັງຄົມ:

- ເປັນເຈົ້າການ ແລະ ເປັນແບບຢ່າງ ໃນການປະຕິບັດມະຕິ, ຄຳສັ່ງຂອງຂັ້ນເທິງ, ປະຕິບັດລະບຽບກົດໝາຍຂອງລັດ; ເປັນເຈົ້າການ ແລະ ມີຫົວຄິດປະດິດສ້າງໃນການຜັນຂະຫຍາຍແຜນການ, ຕົວເລກຄາດໝາຍ ຂອງຄະນະພັກ-ຄະນະປົກຄອງ ຫຼື ຫົວໜ່ວຍແຮງງານ ເຂົ້າສູ່ໜ້າທີ່ວຽກງານທີ່ຕົນເອງໄດ້ຮັບຜິດຊອບ ໄດ້ຮັບໝາກຜົນເປັນຢ່າງດີ.
- ມີທັດສະນະມະຫາຊົນກ້ວາງຂວາງ, ໃກ້ສິດຕິດແທດກັບກຳມະກອນ ແລະ ຜູ້ອອກແຮງງານ, ຮັບຟັງຄຳຄິດຄຳເຫັນຂອງໝູ່ເພື່ອນ; ເປັນແບບເປັນຢ່າງທີ່ດີ, ບໍ່ຫຼົງກົນຟຸມເຟືອຍໃນການດຳລົງຊີວິດ.
- ເປັນເຈົ້າການປະກອບຄຳຄິດຄຳເຫັນຢູ່ໃນກອງປະຊຸມ ແລະ ນຳເອົາຄວາມຄິດເຫັນ, ແນວຄິດຈິດໃຈ, ຄວາມມຸ່ງມາດປາຖະໜາ ທີ່ພົວພັນເຖິງສິດ-ຜົນປະໂຫຍດອັນຊອບທຳຖືກກົດໝາຍ ສ່ອງແສງລາຍງານໃຫ້ການຈັດຕັ້ງຂອງຕົນ, ໃຫ້ສະມາຊິກສະພາ ແລະ ເຂົ້າຮ່ວມຕິດຕາມກວດກາການປະຕິບັດໜ້າທີ່ຂອງສະມາຊິກສະພາຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ເປັນປົກກະຕິ.

5. ເປັນເຈົ້າເຂົ້າຮ່ວມການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ, ລະບຽບກົດໝາຍຂອງລັດ:
- ເປັນເຈົ້າການ ແລະ ເປັນແບບຢ່າງໃນການ ປະຕິບັດແນວທາງ, ນະໂຍບາຍວຽກງານຕ່າງປະເທດຂອງພັກ-ລັດແຕ່ລະໄລຍະເປັນຢ່າງດີ, ມີທັດສະນະການເມືອງ ແລະ ຈໍາແນກມິດ-ສັດຕູຈະແຈ້ງ.
- ມີຄວາມສາມັກຄີສະໜິດແໜ້ນ, ເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ກັບເພື່ອນຮ່ວມວຽກງານ, ກັບຜູ້ຊ່ຽວຊານ ຫຼື ຜູ້ອອກແຮງງານຕ່າງປະເທດ(ຖ້າມີ) ຢູ່ຫົວໜ່ວຍແຮງງານຂອງຕົນ.
- ມີສະຕິລະວັງຕົວຕໍ່ການບິດເບືອນຕົວະຍົວະຫຼອກລວງ, ການໃສ່ຮ້າຍປ້າຍສີ ຕໍ່ການຈັດຕັ້ງພັກ-ລັດ ແລະ ກົນອຸບາຍຫັນປ່ຽນໂດຍສັນຕິ ຂອງສັດຕູ, ຂອງກຸ່ມຄົນທີ່ບໍ່ຫວັງດີ.

<u>ຄ. ເງື່ອນໄຂ ການຈັດຕັ້ງສະຫະພັນກໍາມະບານທຸກຂັ້ນ ເປັນສະຫະພັນກໍາມະບານ 5 ເປັນເຈົ້າ:</u>

ສະຫະພັນກໍາມະບານຮາກຖານ, ເມືອງ, ແຂວງ, ນະຄອນຫຼວງ, ກະຊວງ/ອົງການຈະໄດ້ຕີລາຄາເພີ່ມເຕີມ ຕາມເງື່ອນໄຂລຸ່ມນີ້ ຈຶ່ງສາມາດຮັບຮອງນາມມະຍົດເປັນສະຫະພັນກໍາມະບານ 5 ເປັນເຈົ້າ:

1. ມີຈໍານວນໜ່ວຍກໍາມະບານທີ່ຂຶ້ນກັບ ໄດ້ຮັບການກວດກາປະເມີນຜົນແຕ່ລະປີ 100%, ໃນນັ້ນໄດ້ຮັບຮອງນາມມະຍົດໜ່ວຍກໍາມະບານ 5 ເປັນເຈົ້າ ກວມ 80% ຂຶ້ນໄປ.
2. ບໍ່ມີພະນັກງານກໍາມະບານ, ສະມາຊິກກໍາມະບານຢູ່ໃນການຈັດຕັ້ງຂັ້ນຂອງຕົນ ຖືກປະຕິບັດວິໄນສະຖານເສຍທາດຂາດຄຸນຂຶ້ນໄປ; ຈໍານວນຄະນະບໍລິຫານງານ, ພະນັກງານເຮັດວຽກກໍາມະບານອາຊີບທັງໝົດໄດ້ຜ່ານການປະເມີນຜົນປະຈໍາປີ ແລະ ໄດ້ຢັ້ງຢືນເປັນສະມາຊິກ 5 ເປັນເຈົ້າ ກວມ 80% ຂຶ້ນໄປ.
3. ສະຫະພັນກໍາມະບານໄດ້ເປີດບັ້ນສຶກສາອົບຮົມ, ສ້າງເງື່ອນໄຂໃຫ້ສະມາຊິກກໍາມະບານໄດ້ຄົ້ນຄ້ວາຮໍ່າຮຽນມູນເຊື້ອ, ເຊື່ອມຊຶມແນວທາງຂອງພັກ, ນະໂຍບາຍ, ລະບຽບ, ກົດໝາຍຂອງລັດ, ມະຕິ, ຄໍາສັ່ງຂອງຂັ້ນເທິງຢ່າງໜ້ອຍ 5 ຄັ້ງຕໍ່ປີ.
4. ພາຍໃນການຈັດຕັ້ງ ແລະ ຄະນະບໍລິຫານງານ ໄດ້ເປີດບັ້ນດໍາເນີນຊີວິດການເມືອງເປັນປົກກະຕິ, ມີຄວາມສາມັກຄີເປັນເອກະພາບ, ນໍາພາເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕຢ່າງຖືກຕ້ອງ;ເປັນເຈົ້າການເຂົ້າຮ່ວມ, ປະກອບຄໍາຄິດເຫັນຕໍ່ກອງປະຊຸມວຽກງານຕ່າງໆຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ, ປະຕິບັດລະບອບລາຍງານສ່ອງແສງໃຫ້ຄະນະພັກ ແລະ ສາຍຕັ້ງຂັ້ນເທິງຂອງຕົນເປັນປົກກະຕິ.
5. ເຮັດວຽກມີແຜນການ, ມີຕົວເລກຄາດໝາຍຈະແຈ້ງ,ມະຕິກອງປະຊຸມໃຫຍ່ຂັ້ນເທິງ ແລະ ຂັ້ນຂອງຕົນວາງອອກແຕ່ລະດ້ານ: ການຂະຫຍາຍການຈັດຕັ້ງ, ຂະຫຍາຍສະມາຊິກກໍາມະບານເຂົ້າສູ່ຫົວໜ່ວຍແຮງງານ ແລະ ບັນຫາອື່ນໆໄດ້ປະຕິບັດສໍາເລັດຕາມລະດັບຄາດໝາຍ.
6. ມີກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ມີຄັງສະສົມຂັ້ນຂອງຕົນ, ຮັບ-ສົ່ງເງິນບໍາລຸງ, ຮັບ-ສົ່ງເງິນພັນທະຕ່າງໆຖືກຕ້ອງຕາມກໍານົດເວລາ, ມີການຄຸ້ມຄອງ-ນໍາໃຊ້ຢ່າງໂປ່ງໃສຖືກຕ້ອງຕາມລະບຽບການ ຫຼື ການແນະນໍາທີ່ກ່ຽວຂ້ອງກໍານົດໄວ້.
7. ສໍາລັບພາກສ່ວນໃດທີ່ມີການພົວພັນກັບຕ່າງປະເທດ, ກັບອົງການຈັດຕັ້ງສາກົນ, ອົງການບໍ່ຂຶ້ນກັບລັດຖະບານ(NGOs) ແລະ ຫົວໜ່ວຍແຮງງານທີ່ມີການລົງທຶນຂອງຕ່າງປະເທດ, ມີພະນັກງານຊ່ຽວຊານຕ່າງປະເທດ, ມີກໍາມະກອນຕ່າງປະເທດ ຕ້ອງເປັນເຈົ້າການນໍາພາສະມາຊິກຮັກສາຄວາມສາມັກຄີ ບົນພື້ນຖານຫຼັກການ ແລະ ນະໂຍບາຍການຕ່າງປະເທດ ຂອງພັກ.

III. <u>ວິທີການຈັດຕັ້ງປະຕິບັດ:</u>

ໃນການປະຕິບັດໃຫ້ດໍາເນີນຕາມ 5 ບາດກ້າວດັ່ງນີ້:

ບາດກ້າວທີໜຶ່ງ: ກະກຽມ,ເກັບກຳຂໍ້ມູນ ແລະ ວາງແຜນ.

ບາດກ້າວທີສອງ: ເຜີຍແຜ່, ເຊື່ອມຊຶມເນື້ອໃນມາດຖານ ຂໍ້ແຂ່ງຂັນ 5 ເປັນເຈົ້າ ແລະ ເປີດຂະບວນການແຂ່ງຂັນ.

ບາດກ້າວທີສາມ: ປຸກລະດົມ ຊຸກຍູ້ ແລະ ນຳພາຈັດຕັ້ງປະຕິບັດຂະບວນການແຂ່ງຂັນ.

ບາດກ້າວທີສີ່: ກວດກາ, ຕີລາຄາປະເມີນຜົນການແຂ່ງຂັນ

ບາດກ້າວທີຫ້າ: ສະຫລຸບ ຂະບວນການແຂ່ງຂັນ ແລະ ຮັບຮອງກຳມະບານ 5 ເປັນເຈົ້າ.

**ລາຍລະອຽດໃນແຕ່ລະບາດກ້າວໃຫ້ປະຕິບັດດັ່ງນີ້:**

**ບາດກ້າວທີໜຶ່ງ: ກະກຽມ, ເກັບກຳຂໍ້ມູນ ແລະ ວາງແຜນ.**

- ແຕ່ງຕັ້ງ ຫຼື ປັບປຸງຄະນະຮັບຜິດຊອບຂະບວນການແຂ່ງຂັນ 5 ເປັນເຈົ້າ ແຕ່ລະຂັ້ນ ໂດຍແມ່ນຮອງປະທານເປັນຜູ້ຊີ້ນຳ, ສະຫະພັນກຳມະບານຂັ້ນຮາກຖານ, ໜ່ວຍກຳມະບານ ແມ່ນປະທານ ຫຼື ຫົວໜ້າໜ່ວຍກຳມະບານ ເປັນຫົວໜ້າ ແລະ ພະນັກງານໜ່ວຍງານແຂ່ງຂັນ-ຍ້ອງຍໍ ເປັນທີມງານວິຊາການ.(ບ່ອນໃດທີ່ມີການແຕ່ງຕັ້ງແລ້ວ ຖ້າບໍ່ມີການປ່ຽນແປງດ້ານບຸກຄະລາກອນໃນໂຄງປະກອບການຈັດຕັ້ງ ກໍໃຫ້ສືບຕໍ່ເຄື່ອນໄຫວໄດ້ເລີຍ).
- ຄະນະຮັບຜິດຊອບຂະບວນການແຂ່ງຂັນແນະນຳດ້ານວິຊາການ, ການສ້າງແຜນ ແລະ ເກັບກຳຂໍ້ມູນດ້ານຈຳນວນ, ດ້ານຄຸນນະພາບຂອງການຈັດຕັ້ງ, ຂອງສະມາຊິກກຳມະບານຢູ່ຂັ້ນຮາກຖານ, ໜ່ວຍກຳມະບານ ທີ່ຂຶ້ນກັບໃຫ້ລະອຽດຈະແຈ້ງ, ຖືກຕ້ອງກັບຄວາມເປັນຈິງ.
- ອີງໃສ່ສະພາບຈຸດພິເສດຂອງສະຫະພັນກຳມະບານແຕ່ລະຂັ້ນ, ອີງໃສ່ບົດສະຫຼຸບ, ຈຸດດີຈຸດອ່ອນ, ບົດຮຽນຖອດຖອນໄດ້ ຈາກການປະເມີນຜົນປີຜ່ານມາແລະ ອີງໃສ່ມະຕິຂອງຄະນະພັກ, ແຜນການ, ຕົວເລກຄາດໝາຍຂອງຄະນະບໍລິຫານງານ, ຫົວໜ່ວຍແຮງງານເພື່ອສ້າງແຜນການແຂ່ງຂັນປະຈຳປີຂອງຮາກຖານ, ໜ່ວຍກຳມະບານ. ຢູ່ໃນແຜນການນັ້ນ ໃຫ້ກຳນົດແຈ້ງບັນດາຄາດໝາຍສູ້ຊົນ, ໄລຍະເວລາປະຕິບັດແຕ່ລະບາດກ້າວ ແລະ ຢູ່ໃນແຕ່ລະບາດກ້າວນັ້ນ ຈະເຮັດວຽກອັນໃດ? ມື້ໃດ? ມີໃຜແດ່ທີ່ຈະເຂົ້າຮ່ວມວຽກງານນັ້ນ?
- ລາຍງານຂໍທິດຊີ້ນຳ ແລະ ຂໍອະນຸມັດຈັດຕັ້ງປະຕິບັດແຜນການແຂ່ງຂັນ5 ເປັນເຈົ້າ ຈາກຄະນະພັກຂັ້ນຂອງຕົນຢ່າງເປັນທາງການ.

**ບາດກ້າວທີສອງ: ເຜີຍແຜ່, ເຊື່ອມຊຶມເນື້ອໃນມາດຖານ ຂໍ້ແຂ່ງຂັນ 5 ເປັນເຈົ້າ ແລະ ເປີດຂະບວນການແຂ່ງຂັນ.**

- ຈັດຕັ້ງບັນໂຄສະນາເຜີຍແຜ່, ເຊື່ອມຊຶມເນື້ອໃນມາດຖານຂໍ້ແຂ່ງຂັນ 5 ເປັນເຈົ້າໃຫ້ແກ່ສະມາຊິກກຳມະບານຂັ້ນຮາກຖານ, ໜ່ວຍກຳມະບານທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ປຸກລະດົມສະມາຊິກກຳມະບານເຂົ້າຮ່ວມໃຫ້ໄດ້ 100%. ໃຫ້ສະຫະພັນກຳມະບານແຕ່ລະຂັ້ນຕິດຕັ້ງປ້າຍກະດານເນື້ອໃນແຂ່ງຂັນ 5 ເປັນເຈົ້າ ຢູ່ໃນສະຖານທີ່ຫ້ອງປະຊຸມ ຫຼື ເຂດຊຸມນຸມຊົນ ທີ່ເຫັນວ່າມີຄວາມເໝາະສົມ.
- ສະຫະພັນກຳມະບານພາກສ່ວນໃດ ເປີດຂະບວນການເປັນຄັ້ງທຳອິດ ແມ່ນໃຫ້ຈັດຕັ້ງພິທີເປີດຂະບວນການແຂ່ງຂັນ 5 ເປັນເຈົ້າຢ່າງເປັນທາງການ ໂດຍການເຂົ້າຮ່ວມຂອງປະທານສະຫະພັນກຳມະບານຂັ້ນລຸ່ມຖັດທັງໝົດ ແລະ ເປັນປະທານຮ່ວມໂດຍສະຫະພັນກຳມະບານຂັ້ນເທິງ, ຄະນະພັກຂັ້ນຂອງຕົນ. **ສຳລັບພາກສ່ວນໃດໄດ້ເປີດແລ້ວ ກໍໃຫ້ສືບຕໍ່ປະຕິບັດບາດກ້າວທີສາມຕໍ່ໄປ.**

**ບາດກ້າວທີສາມ: ປຸກລະດົມ ຊຸກຍູ້ ແລະ ນຳພາຈັດຕັ້ງປະຕິບັດຂະບວນການແຂ່ງຂັນ.**

- ສືບຕໍ່ເຜີຍແຜ່, ອະທິບາຍເນື້ອໃນມາດຖານຂໍ້ແຂ່ງຂັນ 5 ເປັນເຈົ້າແຕ່ລະຂໍ້ໃຫ້ສະມາຊິກກຳມະບານຮັບຮູ້, ເຂົ້າໃຈຢ່າງທົ່ວເຖິງ.
- ແນະນຳ ວິທີການປະຕິບັດ, ການປະພຶດທີ່ຖືກຕ້ອງຂອງສະມາຊິກກຳມະບານ ຕາມທີ່ກຳນົດຢູ່ແຕ່ລະເນື້ອໃນມາດຖານຂໍ້ແຂ່ງຂັນ.
- ຄະນະຮັບຜິດຊອບຂະບວນການແຂ່ງຂັນ ຊອກຮູ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດຂອງຂັ້ນລຸ່ມ ແລະ ສະມາຊິກຢູ່ໃນໜ່ວຍ, ຊອກຫາວິທີການທີ່ເໝາະສົມ ເພື່ອບັນລຸຄາດໝາຍທີ່ວາງໄວ້. ຫາກເຫັນວ່າມີບັນຫາໃດທີ່ບໍ່ສາມາດແກ້ໄຂໄດ້ ໃຫ້ຮີບຮ້ອນຂໍຄຳເຫັນຈາກຄະນະພັກຂັ້ນຂອງຕົນ ແລະ ລາຍງານໃຫ້ສະຫະພັນກຳມະບານຂັ້ນເທິງຂອງຕົນຊາບດ່ວນເພື່ອແກ້ໄຂທັນເວລາ.

**ບາດກ້າວທີສີ່: ກວດກາ, ຕີລາຄາປະເມີນຜົນການແຂ່ງຂັນ**

- ຂອບເຂດໄລຍະເວລາປະເມີນຜົນສະມາຊິກກຳມະບານ ໃຫ້ປະຕິບັດເປັນເອກະພາບ ປີລະ 01 ຄັ້ງ ແຕ່ເດືອນ ເມສາ(4) ຫາເດືອນ ມິຖຸນາ(6) ຂອງທຸກປີ.
- ສະຫະພັນກຳມະບານແຂວງ, ນະຄອນຫຼວງ, ກະຊວງ/ອົງການ, ເມືອງ ແລະ ສະຫະພັນກຳມະບານຂັ້ນຮາກຖານ ແຕ່ງຕັ້ງຄະນະກຳມະການກວດກາປະເມີນຜົນ(ຄະນະສະເພາະກິດ)ຂັ້ນຂອງຕົນຂຶ້ນປະກອບມີພະນັກງານຈາກຂະແໜງການກວດກາ ເປັນຫົວໜ້າຄະນະ, ມີພະນັກງານຂະແໜງຈັດຕັ້ງ, ຄະນະຮັບຜິດຊອບຂະບວນການແຂ່ງຂັນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງເຂົ້າຮ່ວມເປັນຄະນະຕາມຄວາມເໝາະສົມ.
- ເນື້ອໃນການກວດກາ, ຕີລາຄາປະເມີນຜົນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 5 ເປັນເຈົ້າ ສຳລັບສະມາຊິກ ແມ່ນອີງໃສ່ແບບຟອມປະເມີນຜົນສະມາຊິກ, ສຳລັບການຈັດຕັ້ງ ແມ່ນອີງໃສ່ແບບຟອມປະເມີນຜົນການຈັດຕັ້ງ ທີ່ສົ່ງໃຫ້.
- ຄະນະກຳມະການກວດກາປະເມີນຜົນ ລາຍງານຜົນປະເມີນຜົນສະມາຊິກ ໃຫ້ປະທານສະຫະພັນກຳມະບານຂັ້ນຮາກຖານ ຫຼື ໜ່ວຍກຳມະບານຮັບຊາບໂດຍມີການຢັ້ງຢືນຈາກຄະນະພັກຂັ້ນຮາກຖານ ຫຼື ໜ່ວຍພັກ ທີ່ກຳມະບານຮາກຖານ/ໜ່ວຍກຳມະບານນັ້ນຂຶ້ນກັບ.ພາຍຫຼັງມອບບົດສະຫຼຸບລາຍງານນັ້ນແລ້ວ ຄະນະກຳມະການກວດກາປະເມີນຜົນທີ່ສ້າງຕັ້ງຂຶ້ນກໍໝົດໜ້າທີ່.

**ບາດກ້າວທີຫ້າ: ສະຫລຸບ ຂະບວນການແຂ່ງຂັນ ແລະ ຮັບຮອງກຳມະບານ 5 ເປັນເຈົ້າ.**

- ຄະນະຮັບຜິດຊອບຂະບວນການແຂ່ງຂັນ 5 ເປັນເຈົ້າ ຂັ້ນຮາກຖານ, ໜ່ວຍກຳມະບານສະຫຼຸບລາຍງານຜົນການກວດກາປະເມີນໃຫ້ປະທານສະຫະພັນກຳມະບານຂັ້ນເທິງຖັດຕົນ (ປີລະ 01 ຄັ້ງ).
- ພະນັກງານ, ສະມາຊິກກຳມະບານບຸກຄົນໃດໄດ້ຕີລາຄາປະຈຳປີ ຜົນສະເລ່ຍລວມບັນລຸຄາດໝາຍ 80% ຂຶ້ນໄປ ແມ່ນຢັ້ງຢືນ **"ສະມາຊິກກຳມະບານ 5 ເປັນເຈົ້າ ປະຈຳປີ... "**
- ຈາກຜົນຂອງການກວດກາປະເມີນຜົນສະມາຊິກປະຈຳປີໜ່ວຍກຳມະບານໃດ ທີ່ສັງລວມຄະແນນສ່ວນຮ້ອຍຂອງສະມາຊິກທົ່ວໜ່ວຍ ບັນລຸ80% ຂຶ້ນໄປ ແມ່ນໜ່ວຍກຳມະບານນັ້ນ ຈະໄດ້ຮັບໃບຢັ້ງຢືນ 5 ເປັນເຈົ້າ. ເມື່ອໄດ້ຮັບໃບຢັ້ງຢືນ 3 ປີຕໍ່ເນື່ອງ ຈະຖືກຮັບຮອງແລະ ຕິດຕັ້ງປ້າຍກຽດຕິຍົດ **"ໜ່ວຍກຳມະບານ 5 ເປັນເຈົ້າ"**.
- ສະຫະພັນກຳມະບານຮາກຖານໃດ ທີ່ມີໜ່ວຍກຳມະບານໄດ້ຖືກຮັບຮອງເປັນໜ່ວຍກຳມະບານ 5 ເປັນເຈົ້າ ກວມ 80%ແລະ ຜົນການຕີລາຄາຕາມເງື່ອນໄຂ ທີ່ລະບຸໃນຂໍ້ ຄ (ຂໍ້ II) ແຕ່ລະຂໍ້ ໄດ້ 80% ຂຶ້ນໄປ ຈະຖືກຮັບຮອງ ແລະ ຕິດຕັ້ງປ້າຍກຽດຕິຍົດ **"ກຳມະບານຮາກຖານ 5 ເປັນເຈົ້າ"**.

- ຜ່ານບົດລາຍງານ ແລະ ການກວດກາປົກກະຕິໃນແຕ່ລະປີ ຂອງສະຫະພັນກຳມະບານຂັ້ນເທິງ 4 ປີຕໍ່ເນື່ອງ(ທ້າຍສະໄໝໜຶ່ງ) ຫາກເຫັນວ່າ: ສະຫະພັນກຳມະບານຂັ້ນເມືອງໃດ ທີ່ມີຈຳນວນກຳມະບານຮາກຖານ, ໜ່ວຍກຳມະບານຂຶ້ນກັບ ໄດ້ຖືກຮັບຮອງເປັນກຳມະບານ 5 ເປັນເຈົ້າ ກວມ 80% ຂຶ້ນໄປ ແລະ ຜົນການຕີລາຄາຕາມເງື່ອນໄຂ ທີ່ລະບຸໄວ້ໃນຂໍ້ ຄ (ໃນຂໍ້ II)ແຕ່ລະຂໍ້ ປະຕິບັດໄດ້ບໍ່ຫຼຸດ 80% ແມ່ນສະຫະພັນກຳມະບານເມືອງນັ້ນ ຈະໄດ້ຖືກຮັບຮອງ, ຕິດຕັ້ງປ້າຍກຽດຕິຍົດ ສະຫະພັນກຳມະບານເມືອງ 5 ເປັນເຈົ້າ ແລະ ຮັບຫຼຽນກາກຳມະບານ.
- ຜ່ານການກວດກາປົກກະຕິຕິດຕໍ່ກັນ 4 ປີຕໍ່ເນື່ອງ(ທ້າຍສະໄໝ) ຫາກເຫັນວ່າ: ສະຫະພັນກຳມະບານແຂວງ, ນະຄອນຫຼວງ, ກະຊວງ/ອົງການ ທີ່ມີສະຫະພັນກຳມະບານເມືອງ, ພະແນກການອ້ອມຂ້າງ, ກຳມະບານຮາກຖານກົມກອງຂຶ້ນກັບ ໄດ້ຮັບຮອງເປັນສະຫະພັນກຳມະບານ 5 ເປັນເຈົ້າ ກວມ 80% ຂຶ້ນໄປ ແລະ ຜົນການຕີລາຄາຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນຂໍ້ ຄ(ໃນຂໍ້ II)ແຕ່ລະຂໍ້ ປະຕິບັດໄດ້ບໍ່ຫຼຸດ 80% ແມ່ນແຂວງ ຫຼື ນະຄອນຫຼວງ, ກະຊວງ/ອົງການນັ້ນ ຈະຖືກຮັບຮອງ, ຕິດຕັ້ງປ້າຍກຽດຕິຍົດສະຫະພັນກຳມະບານ 5 ເປັນເຈົ້າ, ຮັບທຸງໄຊ 5 ເປັນເຈົ້າ ແລະ ຫຼຽນກາກຳມະບານ.
- ພິທີປະກາດການຮັບຮອງກຳມະບານຮາກຖານ, ໜ່ວຍກຳມະບານ 5 ເປັນເຈົ້າແມ່ນ 3 ປີເທື່ອໜຶ່ງ (ຕາມອາຍຸການຂອງສະໄໝກອງປະຊຸມໃຫຍ່) ແລະ ໃຫ້ຈັດເຂົ້າໃນວາລະດຳເນີນກອງປະຊຸມໃຫຍ່ກຳມະບານຂັ້ນຮາກຖານນັ້ນ ຊຶ່ງກຳນົດໄວ້ໃນມາດຕາ 32 ກົດລະບຽບກຳມະບານ.
- ພິທີປະກາດຮັບຮອງສະຫະພັນກຳມະບານເມືອງ, ແຂວງ, ນະຄອນຫຼວງ, ກະຊວງ/ອົງການ 5 ເປັນເຈົ້າ ແມ່ນ 5 ປີເທື່ອໜຶ່ງ(ຕາມອາຍຸການຂອງສະໄໝກອງປະຊຸມໃຫຍ່) ແລະ ໃຫ້ຈັດເຂົ້າໃນວາລະດຳເນີນກອງປະຊຸມໃຫຍ່ຜູ້ແທນຂັ້ນຂອງຕົນ ຊຶ່ງກຳນົດໄວ້ໃນມາດຕາ 31 ກົດລະບຽບກຳມະບານ.

## IV. <u>ການຍ້ອງຍໍ:</u>

ຜ່ານຂະບວນການແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວ ຫາກພົບເຫັນມີສະມາຊິກກຳມະບານ ຫຼື ການຈັດຕັ້ງກຳມະບານ ທີ່ມີຜົນງານດີເດັ່ນ ສະຫະພັນກຳມະບານແຕ່ລະຂັ້ນ ມີສິດສະເໜີຂໍການຍ້ອງຍໍຕາມຜົນງານຕົວຈິງໃນແຕ່ລະໄລຍະ. ລາຍລະອຽດມອບໃຫ້ສະຫະພັນກຳມະບານແຕ່ລະຂັ້ນເປັນຜູ້ຄົ້ນຄ້ວານຳສະເໜີຂໍການຍ້ອງຍໍໃຫ້ບຸກຄົນ ແລະ ລວມໝູ່ ທີ່ມີຜົນງານດີເດັ່ນປະຈຳປີ, 3 ປີ ຫຼື 5 ປີ ສົ່ງໃຫ້ຄະນະພັກ, ຄະນະປົກຄອງຂັ້ນຂອງຕົນ ຫຼື ຂໍການຍ້ອງຍໍຈາກສະຫະພັນກຳມະບານລາວ ຕາມທີ່ກຳນົດໄວ້ໃນມາດຕາ 51 ກົດລະບຽບຂອງສະຫະພັນກຳມະບານລາວ ສະໄໝທີ VII.

## V. <u>ການນຳໃຊ້ງົບປະມານ:</u>

ງົບປະມານທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 5 ເປັນເຈົ້າ ແມ່ນ: ສ່ວນໜຶ່ງໃຫ້ນຳໃຊ້ເງິນບຳລຸງທີ່ຫັກໄວ້ໃນຂັ້ນຂອງຕົນຕາມສ່ວນແບ່ງທີ່ກຳນົດໄວ້ຢູ່ໃນມາດຕາ 45-46 ກົດລະບຽບຂອງສະຫະພັນກຳມະບານລາວ ແລະ ສ່ວນໜຶ່ງໃຫ້ຂໍງົບປະມານຈາກອົງການປົກຄອງຂັ້ນຂອງຕົນ.

ດັ່ງນັ້ນ, ສູນກາງສະຫະພັນກຳມະບານລາວ ຈຶ່ງໄດ້ອອກບົດແນະນຳການຈັດຕັ້ງປະຕິບັດເນື້ອໃນແຂ່ງຂັນ 5 ເປັນເຈົ້າ ສະບັບນີ້ ໃຫ້ສະຫະພັນກຳມະບານລາວແຕ່ລະຂັ້ນປະຕິບັດເປັນເອກະພາບໃນທົ່ວປະເທດ. ຜ່ານການຈັດຕັ້ງປະຕິບັດ ຫາກເຫັນວ່າມີບັນຫາໃດບໍ່ສອດຄ່ອງ(ຖ້າມີຄວາມຈຳເປັນ) ໃຫ້ລາຍງານເຖິງສູນກາງສະຫະພັນກຳມະບານດ່ວນ ເພື່ອຄົ້ນຄ້ວາປັບປຸງແກ້ໄຂໃຫ້ທັນເວລາ.

ຮອງປະທານ ຜູ້ຊີ້ນຳວຽກງານຂະບວນການ:

ວັນນາ ດວງພະຈັນ